**ກະຊວງແຮງງານ - ທະຫານເສຍອົງຄະ**
**ແລະສັງຄົມ**
ເລກທີ: 866/QĐ-LĐTBXH

**ສາທາລະນະລັດສັງຄົມນິຍົມຫວຽດນາມ**
**ເອກະລາດ - ເສລີພາບ - ຄວາມຜາສຸກ**
ຮ່າໂນ້ຍ, ວັນທີ 10 ກໍລະກົດ 2020

# ຂໍ້ຕົກລົງ
# ວ່າດ້ວຍການສ້າງຕັ້ງວິທະຍາໄລກົດໝາຍພາກກາງ

**ລັດຖະມົນຕີກະຊວງແຮງງານ - ທະຫານເສຍອົງຄະ ແລະສັງຄົມ**

ອີງຕາມກົດໝາຍວ່າດ້ວຍການສຶກສາວິຊາຊີບສະບັບລົງວັນທີ 27/11/2014;

ອີງຕາມດຳລັດເລກທີ 14/2017/NĐ-CP, ລົງວັນທີ 17/02/2017 ຂອງລັດຖະບານສະບັບວ່າດ້ວຍການກຳນົດພາລະບົດບາດ, ໜ້າທີ່, ສິດອຳນາດ ແລະໂຄງປະກອບການຈັດຕັ້ງຂອງກະຊວງແຮງງານ - ທະຫານເສຍອົງຄະ ແລະສັງຄົມ;

ອີງຕາມດຳລັດສະບັບເລກທີ 143/2016/NĐ-CP, ລົງວັນທີ 14/10/2016 ຂອງລັດຖະບານວ່າດ້ວຍການກຳນົດລະບຽບການລົງທຶນໃນຂົງເຂດການສຶກສາວິຊາຊີບ;

ອີງຕາມດຳລັດສະບັບເລກທີ 140/2018/NĐ-CP, ລົງວັນທີ 08/10/2018 ຂອງລັດຖະບານວ່າດ້ວຍການປັບປຸງ, ເພີ່ມເຕີມດຳລັດທີ່ກ່ຽວຂ້ອງກັບການລົງທຶນທາງທຸລະກິດ ແລະລະບຽບການບໍລິຫານຕາມຂອບເຂດການຄຸ້ມຄອງລັດຂອງກະຊວງແຮງງານ - ທະຫານເສຍອົງຄະ ແລະສັງຄົມ;

ອີງຕາມເອກະສານສະບັບເລກທີ 245/BTP-TCCB ລົງວັນທີ 21/01/2020 ຂອງກະຊວງຍຸຕິທຳ ວ່າດ້ວຍການສະເໜີສ້າງຕັ້ງວິທະຍາໄລກົດໝາຍພາກກາງບົນພື້ນຖານການຍົກລະດັບຈາກໂຮງຮຽນກົດໝາຍຊັ້ນກາງ ດົ່ງເຮີຍ;

ອີງຕາມເອກະສານສະບັບເລກທີ 1411/UBND-KGVX, ລົງວັນທີ 29/8/2019 ຂອງຄະນະ ກຳມະການປະຊາຊົນແຂວງກວາງບິງວ່າດ້ວຍການຕົກລົງນະໂຍບາຍຍົກລະດັບໂຮງຮຽນກົດໝາຍຊັ້ນກາງ ດົ່ງເຮີຍ ໃຫ້ເປັນວິທະຍາໄລກົດໝາຍພາກກາງ;

ອີງຕາມການສະເໜີຂອງຫົວໜ້າກົມໃຫຍ່ສຶກສາວິຊາຊີບ,

**ຕົກລົງ**

**ມາດຕາ 1:** ສ້າງຕັ້ງວິທະຍາໄລກົດໝາຍພາກກາງບົນພື້ນຖານການຍົກລະດັບຈາກໂຮງຮຽນກົດໝາຍຊັ້ນກາງ ດົ່ງເຮີຍ.

ສຳນັກງານໃຫຍ່: ໜ່ວຍເລກທີ 6, ຕາແສງ ບັກລີ, ນະຄອນ ດົ່ງເຮີຍ, ແຂວງ ກວາງບິ່ງ

**ມາດຕາ 2:** ວິທະຍາໄລກົດໝາຍພາກກາງແມ່ນໂຮງຮຽນລັດ, ມີຖານະນິຕິບຸກຄົນ, ກາຈ້ຳ, ບັນຊີສະເພາະແລະມີໜ້າທີ່ຄືດັ່ງນີ້:

1. ປະຕິບັດການສຶກສາໃນ 03 ລະດັບ: ຊັ້ນສູງ, ຊັ້ນກາງ ແລະຊັ້ນຕົ້ນ.

2. ບຳລຸງຍົກສູງລະດັບທັກສະວິຊາຊີບໃຫ້ແກ່ຜູ້ອອກແຮງງານຕາມການສະເໜີຂອງພື້ນຖານການຜະລິດ, ທຸລະກິດ, ການບໍລິການ ແລະຜູ້ອອກແຮງງານ.

3. ຄົ້ນຄວ້າ, ນຳໃຊ້ເຕັກນິກ, ເຕັກໂນໂລຢີເພື່ອຍົກສູງຄຸນນະພາບ ແລະປະສິດທິພາບຂອງການສຶກສາ; ຮ່ວມມື, ປະສານສົມທົບເພື່ອຈັດຕັ້ງການສຶກສາ; ຈັດຕັ້ງການຜະລິດ, ທຸລະກິດ, ການບໍລິການຕາມຂໍ້ກຳນົດຂອງກົດໝາຍ.

4. ດຳເນີນງານພາຍໃຕ້ກົນໄກເປັນເຈົ້າຕົນເອງຂອງຫົວໜ່ວຍພາກລັດຕາມຂໍ້ກຳນົດຂອງກົດໝາຍ.

**ມາດຕາ 3:** ວິທະຍາໄລກົດໝາຍພາກກາງສັງກັດກະຊວງຍຸຕິທຳ; ຂຶ້ນກັບການຄຸ້ມຄອງດ້ານການສຶກສາວິຊາຊີບຂອງກະຊວງແຮງງານ - ທະຫານເສຍອົງຄະ ແລະສັງຄົມ; ຄຸ້ມຄອງຕາມເຂດດິນແດນຂອງຄະນະກຳມະການປະຊາຊົນແຂວງ ກວາງບິ່ງ; ດຳເນີນການພາຍໃຕ້ກົດລະບຽບວິທະຍາໄລ ແລະກົດໝາຍວ່າດ້ວຍສຶກສາວິຊາຊີບ.

**ມາດຕາ 4:** ວິທະຍາໄລກົດໝາຍພາກກາງຮັບຜິດຊອບປະຕິບັດຖືກຕາມຄຳໝັ້ນສັນຍາໃນແຜນໂຄງການສ້າງຕັ້ງ ແລະໄດ້ຄັດເລືອກນັກຮຽນຫລັງຈາກໄດ້ຮັບໃບຢັ້ງຢືນການເຄື່ອນໄຫວວຽກງານສຶກສາວິຊາຊີບຕາມທີ່ໄດ້ກຳນົດໃນກົດໝາຍ.

**ມາດຕາ 5:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ມາດຕາ 6:** ກະຊວງຍຸຕິທຳ, ປະທານຄະນະກຳມະການປະຊາຊົນແຂວງ ກວາງບິ່ງ, ຫົວໜ້າຫ້ອງການ, ຫົວໜ້າກົມໃຫຍ່ສຶກສາວິຊາຊີບ, ອຳນວຍການວິທະຍາໄລກົດໝາຍພາກກາງ ແລະຫົວໜ້າຫົວໜ່ວຍ, ການຈັດຕັ້ງທີ່ກ່ຽວຂ້ອງຮັບຜິດຊອບຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້./.

***ທີ່ຮັບ:***

- ຄື ມາດຕາ 6;
- ພະແນກແຮງງານ - ທະຫານເສຍອົງຄະ ແລະສັງຄົມແຂວງ ກວາງບິ່ງ;
- ຮັກສາໄວ້: VT, TCGDNN.

**ລັດຖະມົນຕີ**

**ດ່າວ ງອກ ຢຸງ**